ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງອຸດົມໄຊ

ເລກທີ..523....../ອຊ

ອຸດົມໄຊ, ວັນທີ..11..ພຶດສະພາ 2023

## ຄຳສັ່ງ

### ວ່າດ້ວຍການຈັດຕັ້ງປະຕິບັດກົນໄກການບໍລິການຜ່ານປະຕູດຽວຢູ່ແຂວງອຸດົມໄຊ

ເຖິງ: ບັນດາທ່ານຫົວໜ້າພະແນກການ, ອົງການທຽບເທົ່າຂັ້ນແຂວງ, ຫົວໜ້າກອງບັນຊາການປ້ອງກັນຄວາມສະຫງົບແຂວງ ແລະ ບັນດາທ່ານເຈົ້າເມືອງ 07 ເມືອງ.

- ອີງຕາມ ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015;
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການຈັດຕັ້ງປະຕິບັດກົນໄກການບໍລິການຜ່ານປະຕູດຽວ ຢູ່ອົງການບໍລິຫານລັດ ສະບັບເລກທີ 86/ນຍ, ລົງວັນທີ 03 ສິງຫາ ປີ 2007 ແລະ ຄຳສັ່ງ ວ່າດ້ວຍການເພີ່ມທະວີການຈັດຕັ້ງປະຕິບັດກົນໄກການບໍລິການຜ່ານປະຕູດຽວ ໃນຂອບເຂດທົ່ວປະເທດ ສະບັບເລກທີ 09/ນຍ, ລົງວັນທີ 28 ມັງກອນ 2013;
- ອີງຕາມ ຄຳສັ່ງ ວ່າດ້ວຍທິດທາງ, ເປົ້າໝາຍ ແລະ ມາດຕະຖານ ສ້າງແຂວງເປັນຫົວໜ່ວຍຍຸດທະສາດ, ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ ແລະ ສ້າງບ້ານເປັນຫົວໜ່ວຍພັດທະນາ ສະບັບເລກທີ ເລກທີ 34/ນຍ, ລົງວັນທີ 23 ສິງຫາ 2016;
- ອີງຕາມ ໜັງສືສະເໜີຂອງພະແນກພາຍໃນ ສະບັບເລກທີ.516../ພນຂ, ລົງວັນທີ...9.....ພຶດສະພາ 2023.

ນັບແຕ່ປີ 2021 ເປັນຕົ້ນມາ, ອົງການປົກຄອງແຂວງ ໄດ້ສຸມໃສ່ຈັດຕັ້ງປະຕິບັດ ແລະ ຜັນຂະຫຍາຍ ມະຕິກອງປະຊຸມໃຫຍ່ຜູ້ແທນອົງຄະນະພັກແຂວງ ຄັ້ງທີ IX ແລະ ແຜນພັດທະນາເສດຖະກິດ-ສັງຄົມ 05 ປີ ແຕ່ປີ 2021-2025 ດ້ວຍຈິດໃຈບຸກທະລຸ ທັງ 04 ດ້ານ ຢ່າງແຂງແຮງ ຊຶ່ງຕິດພັນກັບ ການປະຕິບັດກົນໄກການບໍລິການຜ່ານປະຕູດຽວ ແລະ ວຽກງານ 03 ສ້າງ ຄື: ສ້າງແຂວງເປັນຫົວໜ່ວຍຍຸດທະສາດ, ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ ແລະ ສ້າງບ້ານເປັນຫົວໜ່ວຍພັດທະນາ ຢູ່ແຂວງອຸດົມໄຊ ໃຫ້ປະກົດຜົນເປັນຈິງ; ໂດຍໄດ້ຫັນເປັນແຜນການ, ໂຄງການ ແລະ ແຜນດຳເນີນງານຕ່າງໆ ຢ່າງເປັນລະບົບ ສົມຄວນ ໃນທຸກຂົງເຂດວຽກງານ ນັບແຕ່ຂັ້ນແຂວງ, ຂັ້ນເມືອງ ລົງຮອດຂັ້ນບ້ານ ໃນການປັບປຸງແບ່ງຂັ້ນຄຸ້ມຄອງບໍລິຫານລັດ ເຮັດໃຫ້ການມອບສິດ, ຄວາມຮັບຜິດຊອບ ຕາມການແບ່ງຂັ້ນຄຸ້ມຄອງ ແລະ ແບ່ງຜົນປະໂຫຍດລະຫວ່າງຂະແໜງການ ຂັ້ນແຂວງ ກັບຂັ້ນເມືອງ ແລະ ຂະແໜງການ ຂັ້ນເມືອງ ກັບຂັ້ນບ້ານ ມີຄວາມຈະແຈ້ງ, ຊັດເຈນ ພໍສົມຄວນ, ຄວາມເປັນເຈົ້າການຢູ່ຂັ້ນຮາກຖານ ມີຄວາມຮັບຜິດຊອບ ສູງຂຶ້ນ. ເຖິງຢ່າງໃດກໍ່ຕາມ ຜ່ານການຈັດຕັ້ງປະຕິບັດຕົວຈິງ ຍັງເຫັນວ່າ: ຄວາມຮັບຮູ້ເຂົ້າໃຈ ຕໍ່ການປະຕິບັດກົນໄກການບໍລິການຜ່ານປະຕູດຽວ ແລະ ວຽກງານ 03 ສ້າງ ໃນການແບ່ງຂັ້ນຄຸ້ມຄອງບໍລິຫານລັດ ຂອງບັນດາຂະແໜງການ ຂັ້ນແຂວງ ແລະ ບັນດາຂະແໜງການ ຂັ້ນເມືອງ ຍັງບໍ່ທັນເລິກເຊິ່ງ, ບໍ່ເປັນເອກະພາບ ແລະ ຍັງບໍ່ທັນໄດ້ຈັດຕັ້ງປະຕິບັດເປັນຮູບປະທຳ; ສະແດງອອກ: ການປະຕິບັດພາລະບົດບາດຄຸ້ມຄອງມະຫາພາກ ຂອງບັນດາຂະແໜງການ ຢູ່ຂັ້ນແຂວງ ໃນການມອບສິດ, ມອບວຽກ ແລະ ຄວາມຮັບຜິດຊອບ ຕາມຄວາມເໝາະສົມ ໃນການສ້າງສູນບໍລິການຜ່ານປະຕູດຽວ ໃຫ້ຂັ້ນເມືອງ ເພື່ອເປັນຫົວໜ່ວຍເຂັ້ມແຂງຮອບດ້ານ ຍັງບໍ່ທັນແຂງແຮງ ແລະ ເປັນລະບົບຕໍ່ເນື່ອງ; ການປັບປຸງກົນໄກ, ລະບອບປະສານງານ ແລະ ລະບຽບການ ຂອງບັນດາຂະແໜງການຕົນຢູ່ຂັ້ນເມືອງ ໃຫ້ສອດຄ່ອງກັບທິດ 03 ສ້າງ ຍັງເຮັດບໍ່ທັນໄດ້ດີເທົ່າທີ່ຄວນ.

ສະນັ້ນ, ເພື່ອສືບຕໍ່ເສີມຂະຫຍາຍຜົນສຳເລັດເບື້ອງຕົ້ນ ແລະ ແກ້ໄຂຈຸດອ່ອນ, ຂໍ້ຄົງຄ້າງ ໃນໄລຍະຜ່ານມາ ແລະ ແນໃສ່ຮັບປະກັນ ການຈັດຕັ້ງປະຕິບັດການບໍລິການຜ່ານປະຕູດຽວ ຕິດພັນກັບວຽກງານ 03 ສ້າງ ຢູ່ແຂວງອຸດົມໄຊ ໃຫ້

ບັນລຸ ຕາມເນື້ອໃນຈິດໃຈ ມະຕິຂອງກອງປະຊຸມໃຫຍ່ຜູ້ແທນອົງຄະນະພັກແຂວງ ຄັ້ງທີ IX ແລະ ແຜນພັດທະນາເສດຖະກິດ-ສັງຄົມ 05 ປີ ແຕ່ປີ 2021-2025 ທີ່ໄດ້ຮັບຮອງ ແລະ ຄາດໝາຍທີ່ວາງໄວ້.

## ເຈົ້າແຂວງ ອອກຄຳສັ່ງ:

1. ໃຫ້ບັນດາທ່ານຫົວໜ້າພະແນກການ, ອົງການທຽບເທົ່າຂັ້ນແຂວງ, ຫົວໜ້າກອງບັນຊາການປ້ອງກັນຄວາມສະຫງົບແຂວງ ແລະ ເຈົ້າເມືອງ 07 ເມືອງ ສືບຕໍ່ເພີ່ມທະວີ ການຈັດຕັ້ງປະຕິບັດກົນໄກການບໍລິການຜ່ານປະຕູດຽວ ຕິດພັນກັບວຽກງານ 03 ສ້າງ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ສູງຂຶ້ນຕື່ມ; ໂດຍໃຫ້ຮີບຮ້ອນ ແຕ່ງຕັ້ງຄະນະຮັບຜິດຊອບ ຂັ້ນພະແນກ ການ, ອົງການທຽບເທົ່າຂັ້ນແຂວງ, ກອງບັນຊາການປ້ອງກັນຄວາມສະຫງົບແຂວງ ແລະ ຂັ້ນເມືອງ ຊຶ່ງຫົວໜ້າພະແນກການ, ອົງການຂັ້ນແຂວງ, ຫົວໜ້າກອງບັນຊາການປ້ອງກັນຄວາມສະຫງົບແຂວງ ແລະ ເຈົ້າເມືອງ ເປັນຫົວໜ້າຄະນະດັ່ງກ່າວ;

2. ໃຫ້ບັນດາທ່ານຫົວໜ້າພະແນກການ, ອົງການທຽບເທົ່າຂັ້ນແຂວງ, ຫົວໜ້າກອງບັນຊາການປ້ອງກັນຄວາມສະຫງົບແຂວງ ແລະ ເຈົ້າເມືອງ 07 ເມືອງ ຈັດຕັ້ງການໂຄສະນາ, ເຜີຍແຜ່ ແລະ ເຊື່ອມຊຶມບັນດານິຕິກຳຕ່າງໆ ກ່ຽວກັບການຈັດຕັ້ງປະຕິບັດກົນໄກການບໍລິການຜ່ານປະຕູດຽວ ໃຫ້ບັນດາການຈັດຕັ້ງ ແລະ ພະນັກງານ-ລັດຖະກອນ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ມີຄວາມຮັບຮູ້ ແລະ ເຂົ້າໃຈ ເປັນເອກະພາບກັນຢ່າງເລິກເຊິ່ງ; ພ້ອມທັງ, ເອົາໃຈໃສ່ ນຳພາ-ຊີ້ນຳບັນດາຫົວໜ່ວຍການຈັດຕັ້ງ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ປັບປຸງບັນດາລະບົບ, ກົນໄກ, ລະບຽບການ ແລະ ຂັ້ນຕອນ ການອອກໃບອະນຸຍາດຕ່າງໆ ທີ່ເຫັນວ່າເປັນການກີດໜ່ວງຖ່ວງດຶງ, ສ້າງຄວາມຫຍຸ້ງຍາກ ໃຫ້ແກ່ອົງການຈັດຕັ້ງ, ນັກທຸລະກິດ ຫຼື ປະຊາຊົນ ແນ່ໃສ່ເຮັດໃຫ້ມີຄວາມກະທັດຮັດ, ຮັດກຸມ, ໂປ່ງໃສ, ສະດວກ, ວ່ອງໄວ, ຮັບປະກັນຄວາມຖືກຕ້ອງ, ສອດຄ່ອງກັບກົດໝາຍ ແລະ ລະບຽບການ;

3. ໃຫ້ບັນດາພະແນກການ, ອົງການທຽບເທົ່າຂັ້ນແຂວງ, ກອງບັນຊາການປ້ອງກັນຄວາມສະຫງົບແຂວງ ເພີ່ມທະວີ ແລະ ຍົກສູງ ພາລະບົດບາດການຄຸ້ມຄອງມະຫາພາກຂັ້ນແຂວງ, ເອົາໃຈໃສ່ແບ່ງຂັ້ນຄຸ້ມຄອງ ໂດຍກຳນົດໃຫ້ລະອຽດ, ຈະແຈ້ງ ແລະ ຂາດຕົວ; ວຽກອັນໃດ ແມ່ນເຈົ້າແຂວງ ຫຼື ພະແນກການ, ອົງການທຽບເທົ່າຂັ້ນແຂວງ, ກອງບັນຊາການປ້ອງກັນຄວາມສະຫງົບແຂວງ ເປັນຜູ້ຮັບຜິດຊອບຄຸ້ມຄອງ, ពិຈາລະນາອະນຸຍາດ ຫຼື ອະນຸມັດ; ອັນໃດແມ່ນເຈົ້າເມືອງ ຫຼື ຫ້ອງການ, ອົງການທຽບເທົ່າຂັ້ນເມືອງ, ກອງບັນຊາການປ້ອງກັນຄວາມສະຫງົບເມືອງ ເປັນຜູ້ຮັບຜິດຊອບຄຸ້ມຄອງ, ពិຈາລະນາອະນຸຍາດ ຫຼື ອະນຸມັດ;

4. ໃຫ້ບັນດາພະແນກການ, ອົງການທຽບເທົ່າຂັ້ນແຂວງ, ກອງບັນຊາການປ້ອງກັນຄວາມສະຫງົບແຂວງ ແລະ ຫ້ອງການ, ອົງການທຽບເທົ່າຂັ້ນເມືອງ, ກອງບັນຊາການປ້ອງກັນຄວາມສະຫງົບເມືອງ ທີ່ເຮັດວຽກງານພົວພັນເຖິງການບໍລິການ, ການອະນຸຍາດຕ່າງໆ ຕ້ອງນຳເຂົ້າຜ່ານການບໍລິການຜ່ານປະຕູດຽວ ບົນພື້ນຖານການແບ່ງຂັ້ນຄຸ້ມຄອງ ແລະ ຂອບເຂດຄວາມຮັບຜິດຊອບຢ່າງຈະແຈ້ງ ເຊັ່ນ:

4.1 ຂັ້ນແຂວງ:

- ການອະນຸຍາດ ການລົງທຶນພາຍໃນ ແລະ ຕ່າງປະເທດ;
- ການອອກບັດຜ່ານແດນ ແລະ ບັດປະຈຳຕົວ;
- ການຈົດທະບຽນວິສາຫະກິດ, ທະບຽນອາກອນ;
- ການຄຸ້ມຄອງການຂົນສົ່ງ, ພາຫະນະ-ການຂັບຂີ່ ແລະ ການປຸກສ້າງ;
- ການບໍລິການແຈ້ງພາສີ, ອາກອນ;
- ການຄຸ້ມຄອງ ແລະ ນຳໃຊ້ທີ່ດິນ;
- ການຄຸ້ມຄອງ ແລະ ນຳໃຊ້ຊັບພະຍາກອນປ່າໄມ້;
- ການຄຸ້ມຄອງສິ່ງແວດລ້ອມ;
- ການຄຸ້ມຄອງແຮງງານ, ການຝຶກອົບຮົມວິຊາຊີບ, ການພັດທະນາສີມືແຮງງານ, ການສົ່ງເສີມການມີວຽກເຮັດງານທຳ ແລະ ສະຫວັດດີການສັງຄົມ;
- ວຽກງານຄຸ້ມຄອງລັດຖະກອນ;
- ການສ້າງຕັ້ງສະມາຄົມ, ມູນນິທິ;

– ວຽກທະບຽນຄອບຄົວ;
– ວຽກວັດທະນະທຳ ແລະ ທ່ອງທ່ຽວ (ທຸລະກິດໂຮງແຮມ, ເຮືອນພັກ, ຮ້ານອາຫານ ແລະ ອື່ນໆ);
– ວຽກສຶກສາ ແລະ ກິລາ (ໂຮງຮຽນ, ສະໜາມກິລາຂະໜາດນ້ອຍຂອງເອກະຊົນ ແລະ ອື່ນໆ);
– ວຽກອື່ນໆ ໂດຍອີງຕາມສະພາບ ແລະ ຈຸດພິເສດຂອງແຂວງ.

4.2 ຂັ້ນເມືອງ:

– ການອະນຸຍາດຈົດທະບຽນວິສາຫະກິດ, ທະບຽນອາກອນ;
– ການຄຸ້ມຄອງການຂົນສົ່ງ, ພາຫະນະ-ການຂັບຂີ່ ແລະ ການປຸກສ້າງ;
– ການບໍລິການແຈ້ງພາສີ, ອາກອນ;
– ການຄຸ້ມຄອງ ແລະ ນຳໃຊ້ທີ່ດິນ;
– ການຄຸ້ມຄອງ ແລະ ນຳໃຊ້ຊັບພະຍາກອນປ່າໄມ້;
– ການຄຸ້ມຄອງສິ່ງແວດລ້ອມ;
– ການຄຸ້ມຄອງແຮງງານ, ການຝຶກອົບຮົມວິຊາຊີບ, ການພັດທະນາສີມືແຮງງານ, ການສົ່ງເສີມການມີວຽກເຮັດງານທຳ ແລະ ສະຫວັດດີການສັງຄົມ;
– ວຽກງານຄຸ້ມຄອງລັດຖະກອນ;
– ວຽກທະບຽນຄອບຄົວ;
– ວຽກສຳມະໂນຄົວ;
– ວຽກວັດທະນະທຳ ແລະ ທ່ອງທ່ຽວ (ທຸລະກິດໂຮງແຮມ, ເຮືອນພັກ, ຮ້ານອາຫານ ແລະ ອື່ນໆ);
– ວຽກສຶກສາ ແລະ ກິລາ (ໂຮງຮຽນ, ສະໜາມກິລາຂະໜາດນ້ອຍຂອງເອກະຊົນ ແລະ ອື່ນໆ);
– ວຽກອື່ນໆ ໂດຍອີງຕາມສະພາບ ແລະ ຈຸດພິເສດຂອງເມືອງ.

5. ໃຫ້ບັນດາພະແນກການ, ອົງການທຽບເທົ່າຂັ້ນແຂວງ, ກອງບັນຊາການປ້ອງກັນຄວາມສະຫງົບແຂວງ ແລະ 07 ເມືອງ ຈັດຕັ້ງປະຕິບັດ ແລະ ຜັນຂະຫຍາຍ ຄຳສັ່ງ ສະບັບນີ້ ຢ່າງກວ້າງຂວາງ ໃຫ້ໄດ້ເປີດສູນບໍລິການຜ່ານປະຕູດຽວຢູ່ຂັ້ນແຂວງ ແລະ 07 ເມືອງ ຊ້າສຸດໃນທ້າຍເດືອນ ຕຸລາ ປີ 2025; ໃນໄລຍະເບື້ອງຕົ້ນ ຕ້ອງກຳນົດບັນດາຈຳນວນໜ້າວຽກ ທີ່ຈະເອົາເຂົ້າສູນບໍລິການຜ່ານປະຕູດຽວ ຢ່າງລະອຽດ, ຈະແຈ້ງ ແລະ ຊັດເຈນ. ໃນນີ້, ມອບໃຫ້ເປັນຄວາມຮັບຜິດຊອບ ຂອງຄະນະນຳແຕ່ລະຂັ້ນ ເອົາໃຈໃສ່ນຳພາ-ຊີ້ນຳຢ່າງໃກ້ຊິດ ແລະ ສ້າງແຜນການ, ແຜນດຳເນີນງານຕ່າງໆ ປະຈຳ 06 ເດືອນຕົ້ນປີ ແລະ 06 ເດືອນທ້າຍປີ ໃນການຈັດຕັ້ງປະຕິບັດວຽກງານດັ່ງກ່າວ ຢ່າງຖືກຕ້ອງ, ມີຈຸດສຸມ ແລະ ຖືເປັນບູລິມະສິດ ຕິດພັນກັບວຽກງານ 03 ສ້າງ ທັງເປັນໄມ້ຫຼາວັດແທກຄວາມຮັບຜິດຊອບ, ຜົນການປະຕິບັດງານ ຂອງພະນັກງານ-ລັດຖະກອນ ຂອງການຈັດຕັ້ງແຕ່ລະຂັ້ນ;

6. ມອບໃຫ້ພະແນກພາຍໃນ ເປັນເສນາທິການ ແລະ ໃຈກາງປະສານງານ ໃຫ້ແກ່ເຈົ້າແຂວງ ໃນການສົມທົບ, ຕິດຕາມ, ຊຸກຍູ້, ແນະນຳ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດກົນໄກການບໍລິການຜ່ານປະຕູດຽວ ຂອງບັນດາພະແນກການ, ອົງການທຽບເທົ່າຂັ້ນແຂວງ, ກອງບັນຊາການປ້ອງກັນຄວາມສະຫງົບແຂວງ ແລະ 07 ເມືອງ ໃນເດືອນພຶດສະພາ ແລະ ເດືອນພະຈິກ ຂອງທຸກໆປີ; ພ້ອມທັງ, ສະຫຼຸບ ລາຍງານຜົນການຈັດຕັ້ງປະຕິບັດກົນໄກການບໍລິການຜ່ານປະຕູດຽວ ໃຫ້ທ່ານເຈົ້າແຂວງ ຮັບຊາບ ເປັນປົກກະຕິ;

7. ໃຫ້ບັນດາທ່ານຫົວໜ້າພະແນກການ, ອົງການທຽບເທົ່າຂັ້ນແຂວງ, ກອງບັນຊາການປ້ອງກັນຄວາມສະຫງົບແຂວງ ແລະ ເຈົ້າເມືອງ 07 ເມືອງ ຈົ່ງຮັບຮູ້ ແລະ ເປັນເຈົ້າການຈັດຕັ້ງປະຕິບັດຄຳສັ່ງສະບັບນີ້ຢ່າງເຂັ້ມງວດ ແລະ ໃຫ້ໄດ້ຮັບຜົນດີ;

8. ຄຳສັ່ງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ເຈົ້າແຂວງ

ແຂວງອຸດົມໄຊ
ເຈົ້າແຂວງ

ບຸນຄົງ ຫຼ້າຈຽມພອນ